ສາທາລະນະລັດປະຊາທິປະໄຕປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ.

ກະຊວງປ້ອງກັນປະເທດ

ກົມໃຫຍ່ພະລາທິການ

ກົມອຸດສາຫະກຳປ້ອງກັນຊາດ

ເລກທີ່ 249 /ກ ອ ຊ

ນະຄອນຫລວງວຽງຈັນ, ວັນທີ່ 09 NOV 2011

ເຖິງ : ກົມການນຳເຂົ້າແລະສົ່ງອອກ ກະຊວງອຸດສາຫະກຳແລະການຄ້າ.

- ອີງຕາມໃບສະເໜີ ເລກທີ່ 3804/ກຂອ.ບຂສ ເຖິງ ກົມອຸດສາຫະກຳປ້ອງກັນຊາດ ໃນວັນທີ່ 12/10/2011 ຂອງ ກົມການນຳເຂົ້າແລະສົ່ງອອກ.

ກົມອຸດສາຫະກຳປ້ອງກັນຊາດ ຂໍແຈ້ງໃຫ້ທ່ານຊາບ ກ່ຽວກັບຂັ້ນຕອນ ແລະ ບ່ອນອີງອະນຸມັດ ນຳເຂົ້າ-ສົ່ງອອກ ວັດຖຸລະເບີດ ແລະ ວັດຖຸດິບ ຮັບໃຊ້ການຜະລິດ ລະເບີດອຸດສາຫະກຳ ຄືດັ່ງນີ້

I. ອົງການຮັບຜິດຊອບ : ກົມອຸດສາຫະກຳປ້ອງກັນຊາດ ກົມໃຫຍ່ພະລາທິການ ກະຊວງປ້ອງກັນປະເທດ.

II. ພື້ນຖານບ່ອນອີງທາງດ້ານຫລັກການ.

1). ຂໍ້ຕົກລົງ ຂອງ ນາຍົກລັດຖະມົນຕີ ແຫ່ງ ສປປ ລາວ ເລກທີ່ 39/ນຍ ລົງວັນທີ່ 12 ກໍລະກົດ 2001. ວ່າດ້ວຍລະບຽບການຄຸ້ມຄອງແລະນຳໃຊ້ ວັດຖຸລະເບີດອຸດສາຫະກຳ ຢູ່ໃນ ສປປ ລາວ.

2). ຂໍ້ຕົກລົງ ຂອງ ລັດຖະມົນຕີ ວ່າການກະຊວງປ້ອງກັນປະເທດ ເລກທີ່ 2450/ກປທ ລົງວັນທີ່ 5/8/2010. ກ່ຽວກັບການຄຸ້ມຄອງ ວັດຖຸລະເບີດອຸດສາຫະກຳ ຢູ່ໃນ ສປປ ລາວ.

3). ດຳລັດຂອງນາຍົກລັດຖະມົນຕີ ແຫ່ງ ສປປ ລາວ ເລກທີ່180/ນຍ ລົງວັນທີ່07/07/2009. ວ່າດ້ວຍຂັ້ນຕອນອອກໃບອະນຸຍາດນຳເຂົ້າ-ສົ່ງອອກ ສິນຄ້າ.

4). ແຈ້ງການຂອງກະຊວງອຸດສາຫະກຳແລະການຄ້າ ກ່ຽວກັບສິນຄ້າຄວບຄຸມທີ່ຕ້ອງ ຂໍອະນຸຍາດ ນຳເຂົ້າ ແລະ ສົ່ງອອກ ແບບອັດຕະໂນມັດ ແລະ ບໍ່ອັດຕະໂນມັດ ສະບັບເລກທີ່ 0826/ອຄ.ກຂອ.ລົງວັນທີ່ 03/05/2011.

5). ແຈ້ງການກ່ຽວກັບສິນຄ້າເກືອດຫ້າມ ນຳເຂົ້າ-ສົ່ງອອກ ສະບັບເລກທີ່ 0973/ ອຄ.ກຂອ. ລົງວັນທີ່ 05/05/2011.

III. ເງື່ອນໄຂໄດ້ແກ້ໄຂ ຂໍອະນຸຍາດນຳເຂົ້າ-ສົ່ງອອກ.

ຫົວໜ່ວຍທີ່ມີໃບອະນຸຍາດດຳເນີນກິດຈະການ ແລະ ທຸລະກິດກ່ຽວຂ້ອງເຖິງ ວັດຖຸລະເບີດອຸດສາຫະກຳ

IV. ເງື່ອນໄຂເອກະສານ ຂໍອະນຸຍາດນຳເຂົ້າ-ສົ່ງອອກ.

ກ). ມີໃບສະເໜີຂໍອະນຸຍາດນຳເຂົ້າ ຫລື ສົ່ງອອກ ວັດຖຸລະເບີດອຸດສາຫະກຳ.

ຂ). ມີໃບສັ່ງຊື້ , ໃບແຈ້ງລາຄາສິນຄ້າ ແລະ ໃບຫຸ້ມຫໍ່ສິນຄ້າ.

ຄ). ມີໃບສັນຍາຊື້ຂາຍວັດຖຸລະເບີດອຸດສາຫະກຳ ວັດຖຸດິບ ກັບບໍລິສັດຕ່າງປະເທດ.

ງ). ມີໃບອະນຸຍາດ ນຳເຂົ້າ ແລະ ສົ່ງອອກ ຈາກອົງການທີ່ມີສິດອະນຸມັດ ຂອງ ລັດຖະບານປະເທດ ທີ່ຈະສົ່ງອອກ ຫລື ນຳເຂົ້າ ໃຫ້ບໍລິສັດຕ່າງປະເທດ.

V. ກຳນົດເວລາຄົ້ນຄ້ວາອອກໃບອະນຸຍາດ.

ກ່ຽວກັບການສົ່ງ ຮັບເອກະສານຄົບຖ້ວນ ຖືກຕ້ອງ ເຫມາະສົມກັບເວລາ , ກົມອຸດສາຫະກຳປ້ອງກັນຊາດ ຈະໄດ້ກວດເບິ່ງ ບໍ່ເກີນ 5 - 6 ວັນເຮັດວຽກລັດຖະການ. ລະອຽດມີຕາຕະລາງ ເນື້ອໃນບັນດາບາດກ້າວຄື :

1. ຂັ້ນຕອນບາດກ້າວ.

| ລ/ດ | ຂັ້ນຕອນບາດກ້າວ | ກຳນົດເວລາ |
|---|---|---|
| 1. | ຂາອອກ-ຂາເຂົ້າ ຮັບເອກະສານ ສົ່ງໃຫ້ກົມອຸດສາຫະກຳ ຄົ້ນຄ້ວາ. | 2 ວັນ |
| 2. | ກວດກາເອກະສານ ຄົບຖ້ວນ , ບໍ່ຄົບຖ້ວນ , ປັບປຸງແກ້ໄຂເນື້ອໃນ. | 3 ວັນ |
| | ເຊັນ ປະທັບຕາ ໃບອະນຸຍາດ ແລະ ເຊັນມອບຮັບ ໃບອະນຸຍາດ. | 1 ວັນ |

ທີ່ ໜ້າ ກົມອຸດສາຫະກຳປ້ອງກັນຊາດ

ກະຊວງປ້ອງກັນປະເທດ
ກົມອຸດສາຫະກຳປ້ອງກັນຊາດ

ກິລາກອນ ບຸນມະຜົນ